# ຄວາມຄືບໜ້າໃນການກະກຽມຈັດ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV ໃນປີ 2025

ໂດຍ: ທ່ານ ວົງຄຳແຫງ ວົງທະຈັກ ຫົວໜ້າກົມຮ່ວມ
ມື ແລະ ການເງິນສາກົນ, ກະຊວງການເງິນ

# ຫົວຂໍ້ນຳສະເໜີ:

- *I. ແນວຄວາມຄິດ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV*
- *II. ກອງປະຊຸມປີ່ນອ້ອມ ເພື່ອກະກຽມໃຫ້ແກ່ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV*
- *III. ພາລະບົດບາດ ແລະ ໜ້າທີ່ ຂອງໜ່ວຍງານຂະແໜງການ*



# I. ແນວຄວາມຄິດຂອງກອງປະຊຸມໂຕະມົນລະ ດັບສູງ ຄັ້ງທີ XIV ໃນປີ 2025

ຫົວຂໍ້ກອງປະຊຸມໂຕະມົນລະດັບສູງ 2025

*"ຍົກສູງການເປັນຄູ່ຮ່ວມ ດ້ານການພັດທະນາ ທີ່ມີປະສິດທິຜົນ ໃນການຊຸກຍູ້ຈັດຕັ້ງປະຕິບັດແຜນພັດທະນາເສດຖະ ກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ ແລະການຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ".*

**ຈຸດປະສົງ:**

ປຶກສາຫາລື ກ່ຽວກັບຂະບວນການປະເມີນ ແລະ ທົບທວນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນໄລຍະ 5 ປີ ຜ່ານມາ ແລະ ນຳສະເໜີແຜນພັດທະນາເສດຖະ ກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງຕໍ່ໄປ ລວມທັງ ວິທີການ ແລະຂັ້ນຕອນໃນການຈັດຕັ້ງປະຕິບັດ. ເຊິ່ງຜົນຂອງກອງປະຊຸມໂຕະມົນລະດັບສູງ ຈະໄດ້ເຮັດບົດລາຍງານຫາ ນາຍົກລັດຖະມົນຕີ ເພື່ອມີທິດຊີ້ນຳຈັດຕັ້ງຜັນຂະຫຍາຍໃຫ້ເປັນຮູບປະທຳ ແລະມີປະສິດທິຜົນສູງ ພ້ອມກັນນັ້ນ, ຈະໄດ້ເຂົ້າຢ້ຽມຂໍ່ານັບ ເພື່ອລາຍງານໃຫ້ແກ່ ປະທານປະເທດ ຊາບ.

# ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV

ຈັດກ່ອນກອງປະຊຸມສະພາ (ທ້າຍເດືອນ ພະຈິກ)

ກອງປຊຸມປຶກສາຫາລື ກ່ອນກອງປະຊຸມໂຕະມົນ 1 ຫຼື 2 ອາທິດ;




- ❑ ການຢ້ຽມຢາມໂຄງການພາກສະໜາມ: ບັນດາໜ່ວຍງານຂະແໜງການ ສາມາດໄດ້ຕະຫຼອດປີ;
- ❑ ງານວາງສະແດງຜົນງານຂອງ ໜ່ວຍງານຂະແໜງການ

## ເນື້ອໃນກອງປະຊຸມ

- ປະເມີນ ແລະ ທົບທວນຄືນ ການຈັດປະຕິບັດ NSEDP IX ແລະ ນຳສະເໜີແຜນ NSEDP X;
- ຄວາມຄືບໜ້າການກະກຽມຫຼຸດພົ້ນອອກຈາກ LDC;
- ການຕິດຕາມປະສິດທິຜົນການຮ່ວມມື GPEDC IV ແລະ ຖະແຫຼງການວຽງຈັນ (VD III).

# I. ແນວຄວາມຄິດ ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV (ຕໍ່)

**ຜູ້ແທນທີ່ຈະເຊື້ອເຊີນເຂົ້າຮ່ວມກອງປະຊຸມ:**



- ລັດຖະບານ:
  - ✓ ບັນດາທ່ານ ລັດຖະມົນຕີ/ຮອງລັດຖະມົນຕີ ກະຊວງຂະແໜງການ;
  - ✓ບັນດາທ່ານປະທານ/ຮອງປະທານກຳມາທິການ ສະພາແຫ່ງຊາດ;
  - ✓ບັນດາທ່ານ ປະທານ/ຮອງປະທານອົງການທຽບເທົ່າກະຊວງ;
  - ✓ ບັນດາທ່ານເຈົ້າແຂວງ ແລະ ທ່ານເຈົ້າຄອງນະຄອນຫລວງວຽງຈັນ;
  - ✓ ບັນດາທ່ານຫົວໜ້າກົມ, ຫົວໜ້າຫ້ອງການ ຂອງບັນດາກະຊວງຂະແໜງການ ທີ່ກ່ຽວຂ້ອງ;
  - ✓ຫົວໜ້າພະແນກການເງິນແຂວງ-ນະຄອນຫວງວຽງຈັນ;
  - ✓ ຫົວໜ້າຂະແໜງທີ່ຕິດພັນກັບວຽກງານການຮ່ວມມື ແລະ ການເງິນສາກົນ ຂອງພະແນກການເງິນແຂວງ ແລະ ນະຄອນຫລວງ.

# I. ແນວຄວາມຄິດ ກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ XIV (ຕໍ່)



ການເຊື້ອເຊີນແຂກເຂົ້າຮ່ວມ:

- ❑ ຄູ່ຮ່ວມພັດທະນາ ແລະພາກສ່ວນກ່ຽວຂ້ອງອື່ນໆ:
  - ✓ ຄະນະນຳຂັ້ນສູງ ຈາກຄູ່ຮ່ວມພັດທະນາ ທີ່ມາຈາກສຳນັກງານໃຫ່ຍ ອົງການຈັດຕັ້ງສາກົນ, ບັນດາທ່ານເອກອັກຄະລັດຖະທູດ, ທູຕານຸທູດ, ຜູ້ຕາງໜ້າຄູ່ຮ່ວມພັດທະນາ, ຫົວໜ້າອົງການຈັດຕັ້ງສາກົນ ປະຈຳ ສປປ ລາວ ແລະ ພາກພື້ນ;
  - ✓ ບັນດາ ທ່ານຫົວໜ້າອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ;
  - ✓ ບັນດາ ທ່ານຜູ້ຕາງໜ້າອົງການຈັດຕັ້ງທາງສັງຄົມ, ຜູ້ຕາງໜ້າສະມາຄົມທີ່ບໍ່ຫວັງຜົນກຳໄລ;
  - ✓ ບັນດາທ່ານ ຜູ້ຕາງໜ້າສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ (ພາກເອກະຊົນລາວ ແລະ ຕ່າງປະເທດ).

.

# II. ກອງປະຊຸມປິ່ນອ້ອມ ເພື່ອກະກຽມໃຫ້ແກ່ກອງປະຊຸມໂຕະມົນ ລະດັບສູງ ປີ 2025

- ກອງປະຊຸມປະທານ ແລະ ປະທານຮ່ວມ ໜ່ວຍງານຂະແໜງການ ເພື່ອປຶກສາຫາລື ກັບ ຄູ່ຮ່ວມພັດທະນາ
- ກອງປະຊຸມພົບປະບັນດາຄູ່ຮ່ວມພັດທະນາ ແລະອົງການຈັດຕັ້ງສາກົນ ທີ່ບໍ່ມີສໍານັກງານຕັ້ງຢູ່ ສປປ ລາວ;
- ກອງປະຊຸມຄະນະຊີ້ນໍາລະດັບຊາດ ເພື່ອຂະບວນການໂຕະມົນ;
- ພິທີພົບປະນັກຂ່າວ
- ກອງປະຊຸມປຶກສາຫາລືກ່ອນກອງປະຊຸມໂຕະມົນຂອງຂະແໜງການ ເພື່ອກະກຽມໃຫ້ແກ່ ກອງປະຊຸມໂຕະມົນລະດັບສູງ
- ກອງປະຊຸມໂຕະມົນລະດັບສູງ



# II. ກອງປະຊຸມປິ່ນອ້ອມ ເພື່ອກະກຽມໃຫ້ແກ່ກອງປະ ຊຸມໂຕະມົນ ລະດັບສູງ ໃນປີ 2025 (ຕໍ່)

ພິທີຖະແຫຼງຂ່າວຜົນສຳເລັດກອງປະຊຸມໂຕະມົນລະດັບສູງ

ນຳພາຄູ່ຮ່ວມພັດທະນາ ເຂົ້າຢ້ຽມຂ່ຳນັບ ພະນະທ່ານ ປະທານ ປະທານ ແຫ່ງ ສປປ ລາວ;

ກອງປະຊຸມປຶກສາຫາລືວຽກງານຂະບວນການໂຕະມົນ ແລະວາງທິດທາງແຜນການໃນຕໍ່ໜ້າ (RTP Retreat)

ກອງປະຊຸມເຜີຍແຜ່ຈັດຕັ້ງພັນຂະຫຍາຍຜົນກອງປະຊຸມໂຕະມົນ ລະດັບສູງ ຄັ້ງທີ 14



# II. ພາລະບົດບາດ ແລະ ໜ້າທີ ຂອງໜ່ວຍງານຂະແໜງການ

10 ໜ່ວຍງານຂະແໜງງານເປັນອົງປະກອບສຳຄັນ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນ: ໜ່ວຍງານະແໜງການສຶກສາ; ໜ່ວຍງານຂະແໜງການສາທາລະນະສຸກ; ໜ່ວຍງານຂະແໜງການກະສິກຳ ແລະ ພັດທະນາຊົນນະບົດ; ໜ່ວຍງານຂະແໜງການພື້ນຖານໂຄງລ່າງ; ໜ່ວຍງານຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ໜ່ວຍງານຂະແໜງການກວດກາ ແລະ ຄວບຄຸມຢາເສບຕິດ; ໜ່ວຍງານເສດຖະກິດມະຫາພາກ; ໜ່ວຍງານຂະແໜງການການປົກຄອງ; ໜ່ວຍງານຂະແໜງການການຄ້າ ແລະ ພັດທະນາພາກເອກະຊົນ. ນອກນັ້ນ, ຍັງມີໜ່ວຍງານຂະແໜງການຍ່ອຍທີ່ຂຶ້ນກັບໜ່ວຍງານຂະແໜງການຫຼັກຕ່າງໆ ຕື່ມອີກ.

- ເປັນປະທານ ແລະ ປະທານຮ່ວມ ແລະ ຈັດກອງປະຊຸມຂອງຂະແໜງການຕົນ
- ປະສານສົມທົບ ແລະ ປະກອບຄຳເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ
- ການຈັດວາງສະແດງຜົນສຳເລັດຕ່າງໆຂອງໜ່ວຍງານຂະແໜງໃນລະຫວ່າງກອງປະຊຸມໂຕະມົນ
- ເຂົ້າຮ່ວມໃນກອງປະຊຸມຂະບວນການໂຕະມົນ ແລະ ພິທີຖະແຫຼງຂ່າວ
- ອຳນວຍຄວາມສະດວກຕ່າງໆໃຫ້ແກ່ກອງປະຊຸມຂະບວນການໂຕະມົນ ແລະ ການຢ້ຽມຢາມພາກສະໜາມ
- ສົ່ງບົດລາຍງານໃຫ້ແກ່ກອງເລຂາຄະນະຊີ້ນຳລະດັບຊາດ ເພື່ອຂະບວນການໂຕະມົນ ເພື່ອເປັນຂໍ້ມູນຮັບໃຊ້ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ XIV



# ຂອບໃຈ